ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
..........................

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ: 0031 /ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 20 SEP 2016

# ແຈ້ງການ

ເຖິງ: ພໍ່ແມ່ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ.

ເລື່ອງ: ແຈ້ງລາຍຊື່ບໍລິສັດ ທີ່ໄດ້ຮັບອະນຸຍາດຈາກສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ເຄື່ອນໄຫວທຸລະກິດຫຼັກຊັບ ຢູ່ ສປປ ລາວ.

ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍແຈ້ງມາຍັງພໍ່ແມ່ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ ຊາບທົ່ວເຖິງກັນວ່າ ຮອດປະຈຸບັນ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອະນຸຍາດໃຫ້ບໍລິສັດ ຈຳນວນໜຶ່ງ **ທີ່ສາມາດເຄື່ອນໄຫວທຸລະກິດຫຼັກຊັບ ເປັນຕົ້ນແມ່ນເຮັດໜ້າທີ່ເປັນ ທີ່ປຶກສາດ້ານການເງິນ ເພື່ອກະກຽມອອກຈຳໜ່າຍຫຼັກຊັບຕໍ່ມວນຊົນ; ຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ແລະ ນາຍໜ້າຊື້-ຂາຍຫຼັກຊັບ ເຊັ່ນ: ຊື້-ຂາຍ ຮຸ້ນ, ຮຸ້ນກູ້ ແລະ ດັດສະນີຮຸ້ນ ຢ່າງຖືກຕ້ອງຕາມລະບຽບກົດໝາຍກ່ຽວກັບວຽກງານຫຼັກຊັບ ຂອງ ສປປ ລາວ** ດັ່ງມີລາຍຊື່ ລຸ່ມນີ້:

1. **ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ;**
   BCEL-KT Securities Company Limited ໂທ: 021-265-477
2. **ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ;**
   LANEXANG Securities Public Company ໂທ: 021-265-468
3. **ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ;**
   Lao-China Securities Company Limited ໂທ: 021-419-222
4. **ບໍລິສັດຫຼັກຊັບ ເອພີເອັມ-ລາວ ຈຳກັດ.**
   APM (LAO) Securities Company Limited ໂທ: 021-419-170

ທັງ 4 ບໍລິສັດນີ້ ມີສຳນັກງານຕັ້ງຢູ່ອາຄານຕະຫຼາດຫຼັກຊັບລາວ (ຕໍ່ໜ້າສູນການຄ້າລາວໄອເຕັກ) ຊັ້ນ 5, ຊັ້ນ 6 ແລະ ຊັ້ນ 7 ຕາມລຳດັບ.

ຖ້າທ່ານໃດພົບເຫັນປະກົດການທີ່ບໍລິສັດອື່ນນອກຈາກ 4 ບໍລິສັດ ດັ່ງກ່າວໃຫ້ການບໍລິການທີ່ຄ້າຍຄືກັນແກ່ລູກຄ້າ ກະລຸນາແຈ້ງມາທີ່ **ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ໂທ: 021-217-770** ໃນໂມງລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງການມາຍັງພໍ່ແມ່ປະຊາຊົນ ເພື່ອຊາບ ຕາມນີ້ດ້ວຍ.

ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ

**ສາຍສະໝອນ ຈັນທະຈັກ**